Washington State Department of Social & Health Services
Transforming lives

DEVELOPMENTAL DISABILITIES ADMINISTRATION (DDA)

# ການປົດປ່ອຍອອກຈາກຄວາມຮັບຜິດຊອບ

## Release of Liability

ໃບສັນຍາໃບນີ້ປົດປ່ອຍພະແນກ Developmental Disabilities Administration ອອກຈາກຄວາມຮັບຜິດຊອບທຸກໆຢ່າງທີ່ກ່ຽວພັນນຳການບາດເຈັບ ຫລື ຄວາມເສັຽຫາຍທາງດ້ານຊັບສິນທີ່ຕິດຕາມມາຈາກການຕິດຕັ້ງອຸປະກອນທີ່ໄດ້ຖືກເອົາໃຫ້ໂດຍກົມບໍຣິຫານແຕ່ວ່າບໍ່ໄດ້ຖືກຕິດຕັ້ງໂດຍນາຍຊ່າງທີ່ມີສັນຍາຂອງກົມບໍຣິຫານ. ຜູ້ປົດປ່ອຍໄດ້ຮ້ອງຂໍເອົາເພື່ອຈະເອົາການຕິດຕັ້ງໃຫ້ໂດຍການສ່ຽງອັນຕະຣາຍຂອງເຂົາເຈົ້າເອງ ແລະ ບໍ່ຜ່ານການດຳເນີນການຂອງພະແນກບໍຣິຫານສຳລັບການປັບຕົວໃຫ້ເຂົ້າກັບສະພາບແວດລ້ອມເພື່ອຈະຕິດຕັ້ງອຸປະກອນທີ່ຖືກເອົາໃຫ້.

ໂດຍການເຊັນຊື່ໃສ່ໃບສັນຍາໃບນີ້, ຂ້າພະເຈົ້າ, ______________________________, ຕົກລົງເຫັນພ້ອມທີ່ຈະຖືວ່າພະແນກ Developmental Disability Administration ເປັນອິດສະຣະໂດຍທັງຫມົດຈາກຄວາມຮັບຜິດຊອບທຸກໆຢ່າງ, ລວມທັງຄວາມຮັບຜິດຊອບທາງດ້ານການເງິນສຳລັບການຊື້ເອົາ ແລະ ການຕິດຕັ້ງອຸປະກອນແນວໃດແນວນຶ່ງຢູ່ໃນເຮືອນຂອງຂ້າພະເຈົ້າ. ຂ້າພະເຈົ້າຮັບຮູ້ພັຍອັນຕະຣາຍຕ່າງໆທີ່ກ່ຽວພັນນຳການຕິດຕັ້ງອຸປະກອນທີ່ຖືກເອົາໃຫ້ໂດຍພະແນກບໍຣິຫານ. ຂ້າພະເຈົ້າຮ້ອງຂໍເອົາການກະທຳອັນນີ້ຕາມສະມັກໃຈ, ແລະວ່າການສ່ຽງອັນຕະຣາຍທຸກໆຢ່າງໄດ້ຖືກອະທິບາຍຢ່າງແຈ່ມແຈ້ງໃຫ້ຂ້າພະເຈົ້າຟັງ. ຂ້າພະເຈົ້າຮັບຮູ້ວ່າພະແນກ Developmental Disability Administration ບໍ່ຮັບປະກັນຄວາມປອດພັຍຂອງອຸປະກອນແນວໃດແນວນຶ່ງທີ່ຖືກຈ່າຍເງິນໃຫ້ຕາມຄຳຮ້ອງຂໍຂອງຂ້າພະເຈົ້າ, ຫລື ວ່າເຂົາເຈົ້າຈະຮັບປະກັນການຕິດຕັ້ງອຸປະກອນທີ່ປອດພັຍຢູ່ໃນເຮືອນຂອງຂ້າພະເຈົ້າ.

ໂດຍການເຊັນຊື່ໃສ່ຢູ່ຂ້າງລຸ່ມນີ້ຂ້າພະເຈົ້າສະລະສິດທິທຸກໆຢ່າງທີ່ຈະທຳການຟ້ອງຂຶ້ນສານໃສ່ Developmental Disability Administration ສຳລັບການຊື້ເອົາ ແລະ/ຫລື ການຕິດຕັ້ງຂອງອຸປະກອນແນວໃດແນວນຶ່ງ ແລະ ຈະທຳຄວາມພະຍາຍາມສຸດຂີດທີ່ຈະຮັບປະກັນຄວາມປອດພັຍ ແລະ ການຕິດຕັ້ງອຸປະກອນທີ່ຖືກຕ້ອງ. ຂ້າພະເຈົ້າເຫັນພ້ອມວ່າພະແນກບໍຣິຫານຕ້ອງບໍ່ຮັບຜິດຊອບທີ່ຈະເອົາການສ້ອມແປງໃຫ້ ຫລື ການເອົາອັນໃຫມ່ແທນໃນອຸປະກອນທຸກໆຢ່າງທີ່ຖືກເສັຽຫາຍໃນຣະຫວ່າງການດຳເນີນການຕິດຕັ້ງ.

ຂ້າພະເຈົ້າ, ______________________________, ເຂົ້າໃຈທຸກໆຢ່າງ ແລະ ເຫັນພ້ອມນຳເງື່ອນໄຂຂ້າງເທິງນີ້.

| ລາຍເຊັນ ວັນທີ | ຂຽນຊື່ເປັນຕົວພິມ |
|---|---|
| | |

## ຄຳແນະນຳ

**ຈຸດປະສົງ:** ຈຸດປະສົງຂອງຟອມໃບນີ້ແມ່ນເພື່ອຈະປົດປ່ອຍ Developmental Disabilities Administration ຈາກຄວາມຮັບຜິດຊອບທຸກໆຢ່າງທີ່ກ່ຽວພັນນຳການບາດເຈັບ ຫລື ຄວາມເສັຽຫາຍທາງຊັບສິນທີ່ຕິດຕາມມານຳການຕິດຕັ້ງອຸປະກອນທີ່ຖືກເອົາໃຫ້ໂດຍພະແນກບໍຣິຫານເມື່ອເວລາລູກຄ້າຂອງ DDA ຫລື ຜູ້ຕາງຫນ້າຕາມກົດຫມາຍໄດ້ຮ້ອງຂໍໃຫ້ການຕິດຕັ້ງສິ່ງຂອງອັນນັ້ນບໍ່ໃຫ້ຖືກຕິດຕັ້ງໂດຍນາຍຊ່າງຂອງພະແນກບໍຣິຫານທີ່ມີສັນຍາ.

**ເມື່ອໃດໃບຟອມໃບນີ້ຈະຖືກໃຊ້?** ໃບຟອມໃບນີ້ແມ່ນຕ້ອງການເມື່ອເວລາລູກຄ້າ ຫລື ຜູ້ຕາງຫນ້າຕາມກົດຫມາຍໄດ້ເລືອກເອົາທີ່ຈະໃຫ້ຄົນອື່ນໃຫ້ຕິດຕັ້ງອຸປະກອນທີ່ໄດ້ຖືກຈ່າຍເງິນໃຫ້ໂດຍ DDA ແຕ່ວ່າບໍ່ຖືກຕິດຕັ້ງໂດຍນາຍຊ່າງທີ່ມີສັນຍານຳ DDA .

**ແມ່ນໃຜສາມາດເຊັນຊື່ໃສ່ຟອມໃບນີ້?** ລູກຄ້າຂອງ DDA ຫລື ຜູ້ປົກຄອງຕາມກົດຫມາຍຂອງເຂົາເຈົ້າ. ຖ້າຫາກວ່າເປັນຊັບສິນໃຫ້ເຊົ່າ, ເຈົ້າຂອງບ້ານຕ້ອງໄດ້ເຊັນຊື່ໃສ່ໃບປົດປ່ອຍ.

**ໃບຟອມໃບນີ້ຈະຖືກຊອກເຫັນຢູ່ໃສ?** ຢູ່ໃນພາກສ່ວນທາງກົດຫມາຍຂອງສຳນວນເອກສານຂອງລູກຄ້າ.